# ຄຳແຈ້ງການຂອງ PEAR

ໃນເດືອນມາກຣ໌ 2022, ເຈົ້າແຂວງ Inslee ໄດ້ສັ່ງໃຫ້ຫ້ອງການຂອງຣັດຖະບານໃຫ້ວາງໃຊ້ຄຳສັ່ງ Executive Order 22-04: ການວາງໃຊ້ແຜນການແລະບົດບາດ Pro-Equity Anti-Racism (PEAR) ຂອງຣັດວໍຊິງຕັນ. ຈຸດປະສົງຂອງ PEAR ແມ່ນເພື່ອຈະເຣັດໃຫ້ມີສະພາບແວດລ້ອມທີ່ກໍ່ໃຫ້ເກີດມີການເປັນເຈົ້າຂອງແລະກໍ່ຕັ້ງການພ້ອມຄວາມຍຸຕິທັມແລະຕໍ່ຕ້ານການກຽດຊັງຜິວພັນສຳລັບພະນັກງານຂອງ Health Care Authority (HCA) ແລະບຸກຄົນທີ່ພວກເຮົາເຣັດວຽກນຳແລະຮັບໃຊ້.

PEAR ແມ່ນພາກສ່ວນນຶ່ງຂອງວຽກງານຄວາມສະເມີພາບສຸຂະພາບຂອງ HCA, ຊຶ່ງເປັນຄຸນຄ່າແກ່ນແທ້ຂອງຫ້ອງການຂອງພວກເຮົາ. ສຳລັບ HCA, **ຄວາມສະເມີພາບສຸຂະພາບຫມາຍຄວາມວ່າທຸກໆຄົນມີໂອກາດຍຸຕິທັມແລະຖືກຕ້ອງທີ່ຈະແຂງແຮງເທົ່າທີ່ຈະເປັນໄປໄດ້.**

## ສາຍວຽກງານ PEAR

ພາກສ່ວນຂອງວຽກງານ PEAR ຂອງພວກເຮົາແມ່ນມຸ່ງຫມາຍໃສ່ສີ່ຈຳພວກ,ຊຶ່ງຖືກເອີ້ນວ່າແມ່ນ PEAR "ສາຍການບໍຣິການ" ຫລືສາຍວຽກງານ:

- **ການດຳເນີນການແລະການບໍຣິການຂອງຜູ້ນຳ:** ການກ້າວຫນ້າພາກປະຕິບັດແລະຣະບົບຂອງ PEAR ໃນທຸກໆລະດັບຂອງຣັດຖະບານຂອງຣັດໂດຍຜ່ານການພັດທະນາອົງການຈັດຕັ້ງທີ່ຜ່ອງໃສ,ຫວັງເພິ່ງໄດ້,ຜູ້ນຳທີ່ປັບປຸງໄດ້,ແລະພະນັກງານປັບປຸງປ່ຽນແປງ.
- **ຍຸດທະວິທີຂໍ້ມູນແລະການລາຍງານ:** ການພັດທະນາການດຳເນີນການນຳຍຸດທະວິທີຂໍ້ມູນແລະການລາຍງານທີ່ອູ້ມຊູການພັດທະນາການຈັດຕັ້ງ PEAR ຂອງຣັດວໍຊິງຕັນ.ອັນນີ້ຈະຊ່ວຍຮັບປະກັນວ່າພວກເຮົາມຸ່ງຫມາຍໃສ່ໂຂງເຂດທີ່ຄວາມຕ້ອງການແມ່ນຍິ່ງໃຫຍ່.
- **ການເຂົ້າຮ່ວມນຳແລະການປະສານງານຂອງຊຸມຊົນ:** ການເຣັດວຽກເພື່ອຈະຮັບປະກັນຊຸມຊົນຂອງພວກເຮົາ,ພະນັກງານ,ແລະເພື່ອນຮ່ວມງານເພື່ອຈະພັດທະນາແລະແຈ້ງບອກຄວາມພະຍາຍາມຂອງ PEAR. ພວກເຮົາກຳລັງກໍ່ສ້າງການປະສານງານຮ່ວມກັນແລະຊັບພະຍາກອນຂອງ HCA ແລະໄດ້ເພີ້ມປະຣິມານເພື່ອຈະກະຈາຍສຽງຂອງຊຸມຊົນ.
- **ຄວາມສະເມີພາບແຮງງານ:** ລົງທຶນໃນອົງການແລະປະເພນີຂອງ PEAR. ອັນນີ້ຫມາຍຄວາມວ່າພວກເຮົາກໍ່ສ້າງທີ່ລຳລຽງຕອບສະນອງຕໍ່ຄວາມມາກມາຍຫລາຍຊົນຊາດແລະປະເພນີວັດທະນະທັມສຳລັບພະນັກງານຂອງຣັດໃນທຸກໆລະດັບ.ພວກເຮົາເຣັດໂອກາດຂຶ້ນມາສຳລັບທຸກໆຄົນເພື່ອຈະນຳເອົາຕົວຂອງເຂົາເຈົ້າທັງຫມົດມາບ່ອນເຣັດວຽກແລະຮູ້ສຶກຍິນດີຕ້ອນຮັບ,ອູ້ມຊູ,ແລະເຫັນຄຸນຄ່າ.

## ຄວາມຄາດຫມາຍຂອງພະນັກງານ

ພວກເຮົາເປັນຜູ້ທຳການປ່ຽນແປງໃນຄວາມສະເມີພາບທາງສຸຂະພາບ.ໃນຖານະເປັນເປັນຜູ້ທຳການປ່ຽນແປງ, HCA ຊັກຊວນໃຫ້ພະນັກງານແລະຜູ້ນຳທີ່ຈະ:

- ເຂົ້າຮ່ວມໃນຄວາມສະເມີພາບສຸຂະພາບແລະຄວາມພະຍາຍາມໃນຄວາມຫລາຍຊົນຊາດ,ຄວາມສະເມີພາບ,ແລະການລວມເຂົ້ານຳ (DEI).
- ເອົາການຝຶກຝົນແລະເຂົ້າຮ່ວມນຳງານສຳຄັນ/ການສຳມະນາທີ່ມຸ່ງຫມາຍໃສ່ຄວາມສະເມີພາບສຸຂະພາບແລະ DEI.
- ເອົາໃຫ້ແລະແລກປ່ຽນນຳກັນຊັບພະຍາກອນນຳທີມງານແລະເພື່ອນຮ່ວມງານຂອງເຂົາເຈົ້າ.
- ເຂົ້າຮ່ວມນຳການສົນທະນາກ່ຽວກັບຄວາມສະເມີພາບສຸຂະພາບແລະ DEI.
- ເລີ້ມຕົ້ນຫລືດຳເນີນຕໍ່ໄປການເດີນທາງຂອງເຂົາເຈົ້າໄປສູ່ຄວາມຮັບຮູ້ແລະຄວາມເຂົ້າໃຈໃນຄວາມສະເມີພາບສຸຂະພາບແລະ DEI.

## PEAR Community Advisory Team (CAT)

ກຸ່ມນີ້ໄດ້ຖືກປະກອບດ້ວຍບຸກຄົນແລະອົງການຕັ້ງຢູ່ໃນຊຸມຊົນທີ່ເປັນຕົວແທນປະຊາຊົນມາກມາຍຫລາຍຊົນຊາດແລະຊຸມນຸມຊົນຂອງຣັດວໍຊິງຕັນຫລາຍໆບ່ອນ.ສະມາຊິກຂອງ PEAR CAT ຫລິ້ນບົດບາດສຳຄັນໃນການແຈ້ງບອກຍຸດທະວິທີຄວາມສະເມີພາບສຸຂະພາບຂອງ HCA, ກິຈກັມການຊັກຊວນຊຸມຊົນ,ແລະການແລກປ່ຽນປະສົບປະການສ່ວນຕົວ/ເກີດຜ່ານມາກ່ຽວກັບວ່າໂຄງການແລະການບໍຣິການຂອງ HCA ມີຜົນສະທ້ອນເຖິງເຂົາເຈົ້າແລະຊຸມຊົນຂອງເຂົາເຈົ້າແນວໃດ.

ພວກເຮົາພ້ອມແລ້ວທີ່ຈະດຳເນີນຕໍ່ໄປທີ່ຈະວາງໃຊ້ PEAR. ໂດຍຜ່ານ PEAR ແລະຄວາມພະຍາຍາມຄວາມສະເມີພາບສຸຂະພາບອື່ນໆ, ພວກເຮົາສົ່ງເສີມຄວາມສະເມີພາບ,ຄວາມຍຸຕິທັມ,ການເຂົ້າເຖິງ,ແລະການເປັນເຈົ້າຂອງສຳລັບພະນັກງານຂອງ HCA ແລະຄົນທີ່ພວກເຮົາຮັບໃຊ້.

ຕິດຕໍ່ຫາພວກເຮົາໄດ້ທີ່ hcaequity@hca.wa.gov ຫລື ແວ່ປັ້ຽມແວບໄຊ້ທ໌ຂອງ HCA ເພື່ອຣາຍຣະອຽດເພີ້ມເຕີມ.